XAYYAVONG et al. (2023). Souphanouvong University Journal of Multidisciplinary Research and Development. ISSN 2521-0653. Volume 9. Issue 3. Jul - Sep. 2023. Page 204 – 215

# ປັດໄຈທີ່ສົ່ງຜົນຕໍ່ການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດ ລາວ ມະຫາຊົນ ສາຂາຫຼວງພະບາງ

**ສົມ ພົງ ໄຊຍະວົງ, ຈະຣີ ຢ່າງແສນໄຊ ແລະ ມົງຄຸນ ວັດທະນາ**

*ພາກວິຊາບໍລິຫານທຸລະກິດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລສຸພານຸວົງ, ສປປ ລາວ*

***ຕິດຕໍ່ພົວພັນ:*** *ສົມພົງ ໄຊຍະວົງ, ເບີໂທ: +85620 58 14 9999, ອີເມວ: sayavong58149999@Gmail.com*

***ຂໍ້ມູນບົດຄວາມ:***
*ການສົ່ງບົດ: 10 ມິຖຸນາ 2023*
*ການປັບປຸງ: 30 ກໍລະກົດ 2023*
*ການຕອບຮັບ: 15 ສິງຫາ 2023*

**ບົດຄັດຫຍໍ້**

ການສຶກສາຄັ້ງນີ້ ໄດ້ສຶກສາກ່ຽວກັບຫົວຂໍ້ປັດໄຈທີ່ສົ່ງຜົນຕໍ່ການວາງແຜນທາງການເງິນສ່ວນບຸກຄົນຂອງພະ ນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ຈຸດປະສົງຂອງການສຶກສາແມ່ນສຶກສາພຶດຕິກຳໃນການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າ ຕ່າງປະເທດລາວ ມະຫາ ຊົນ ສາຂາຫຼວງພະບາງ, ສຶກສາປັດໄຈທີ່ມີອິດທິພົນຕໍ່ກັບການວາງແຜນທາງການເງິນສ່ວນບຸກຄົນ ຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ແລະ  ສຶກສາຄວາມສຳພັນລະຫວ່າງປັດໄຈສ່ວນບຸກຄົນຕໍ່ກັບການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາ ຊົນ ສາຂາຫຼວງພະບາງ ໂດຍການສຶກສາແບບປະລິມານໂດຍນຳໃຊ້ແບບສອບຖາມ ແລະ ນຳເອົາຜົນທີ່ໄດ້ສຶກສາໄປວິເຄາະ ຂໍ້ມູນແບບສະຖິຕິທາງພັນລະນາ ແລະ ນຳໃຊ້ໂປຼແກມ SPSS ເຂົ້າຊວ່ຍໃນການວິເຄາະຂໍ້ມູນເພື່ອການອະທິບາຍຜົນ.

ຜົນຂອງການສຶກສາພົບວ່າ: ພຶດຕິກຳໃນການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ໂດຍສ່ວນຫຼາຍແມ່ນວາງແຜນດ້ວຍຕົນເອງ ມີຈຳນວນ 73 ຄົນກວມເອົາ 74.5%, ສ່ວນຫຼາຍແມ່ນຝາກໄວ້ກັບທະນາຄານ ຫຼື ສາຖາບັນການເງິນ ມີຈຳນວນ 56 ຄົນກວມເອົາ 57.1%, ຈຸດປະສົງຫຼັກໃນການວາງແຜນທາງການເງິນ ໂດຍສ່ວນຫຼາຍແມ່ນວາງແຜນເພື່ອໃຫ້ມີອິດສະຫຼະພາບທາງການເງິນ ມີຈຳນວນ 31 ຄົນກວມເອົາ 31.6%, ແລະ ວາງແຜນທາງການເງິນໂດຍເລືອກລົງທຶນ ໂດຍສ່ວນຫຼາຍແມ່ນລົງທຶນໃນທຸລະກິດ (ຊື້ທີ່ດິນ, ອາຄານ, ໂຮງງານ) ມີຈຳນວນ 49 ຄົນກວມເອົາ 50.0%. ການວາງແຜນການຊື້ ຫຼື ຄອບຄອງຊັບສິນ ປະເພດຂອງການແຜນການຊື້ ຫຼື ຄອບຄອງ ໂດຍສ່ວນຫຼາຍແມ່ນອະສັງລິມະຊັບ ເຊັ່ນ: ເຮືອນ, ດິນ ມູນຄ່າ ມີຈຳນວນ 56 ຄົນກວມເອົາ 44.4%, ການວາງແຜນໃນດ້ານຂອງໜີ້ສິນ ປະເພດຂອງໜີ້ສິນ ໂດຍສ່ວນຫຼາຍແມ່ນສິນເຊື່ອເພື່ອທີ່ຢູ່ອາໄສ ມີຈຳນວນ 38 ຄົນກວມເອົາ 28.6%, ສ່ວນໃຫຍ່ວາງແຜນຈະສະສົມເງິນຈຳນວນເທົ່າໃດຕໍ່ເດືອນເພື່ອນຳມາໃຊ້ຫຼັງກະສຽນ ຫຼາຍກ່ວາ 1.000.000 ກີບ ຈຳນວນ 39 ຄົນ ເທົ່າ 39.8%, ແລະ ສ່ວນໃຫຍ່ວິທີຈັດການກັບຄວາມສ່ຽງ ສຶກສາຂໍ້ມູນກ່ອນການນຳເງິນໄປລົງທຶນຢ່າງລະ ອຽດ ຈຳນວນ 58 ຄົນ ເທົ່າ 48.0%. ປັດໄຈທີ່ມີອິດທິພົນຕໍ່ກັບການວາງແຜນທາງການເງິນສ່ວນບຸກຄົນ ພົບວ່າທັງປັດໄຈພາຍໃນ ແລະ ປັດໄຈພາຍນອກທີ່ມີອິດທິພົນຕໍ່ການວາງແຜນການເງິນສ່ວນບຸກຄົນຂອງພະນັກງານທະນະຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ໂດຍລວມແລ້ວມີຄ່າລະດັບທາງສະທິຕິການມີຜົນຢູ່ໃນລະດັບຫຼາຍຕໍ່ພະນັກງານ.

**ຄຳສັບສຳຄັນ:** *ການວາງແຜນການເງິນສ່ວນບຸກຄົນ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ*

# Factors Related to Personal Financial Planning of Officers of Banque Pour Le Commerce Exterieur Du Laos Luangprabang Branch

**Somphong XAYYAVONG, Chahue YANGSANSAY and Mongkhoun VATTHANA**

*Department of Economics, Faculty of Economics and Tourism, Souphanouvong University, Lao PDR*

***Corresponding author:***
*Somphong XAYYAVONG,*
*Tel: +85620 58 14 9999,*
*Email:*
*sayavong58149999@Gmail.com*

***Article Info:***
*Submitted: Jun 10, 2023*
*Revised: Jul 30, 2023*
*Accepted: Aug 15, 2023*

## Abstract

In this study, studying the factors affecting the personal financial planning of the employees of the Foreign Commercial Bank of Laos, Mass., Luang Prabang branch, the purpose of the study is to study the behavior in the personal financial planning of the employees of the Commercial Bank of Laos, Mass., Luang Prabang branch, to study the factors that influence the personal financial planning of the employees of the Commercial Bank, Laos, Mass., Luang Prabang, and to study the relationship between personal factors to the personal financial planning of the employees of the Commercial Bank, Laos, Mass., Luang Prabang branch by quantitative analysis using questionnaires and bringing the results to the data analysis and statistical analysis.

The results of the study found that: the behavior in personal financial planning of employees of the Lao People's Foreign Commercial Bank, Luang Prabang branch, with the majority of them planning on their own, 73 people accounting for 74.5%, most of them depositing money with banks or financial institutions, with the number of 56 people accounting for 57.1%, the main purpose of financial planning, with the majority of people planning for financial freedom, with the number of 31 people accounting for 31.6%, and financial planning by investing, with the majority of people investing in business (buying property, buildings, factories, accounting for 50.40% of people). Planning to buy or own property. The type of plan to buy or own, mostly real estate such as houses, land. The value is 56 people, covering 44.4%. Planning in terms of debt. The type of debt, mostly housing credit, there are 38 people, covering 28.6%. Factors that influence personal financial planning found that both internal and external factors that influence personal financial planning of Lao Foreign Trade Bank employees, Luang Prabang branch, as a whole have a static value that has a great effect on employees.

**Keywords:** *Personal Finance Planning, Banque Pour Le Commerce Exterieur Du Laos Luangprabang Branch*

## 1. ພາກສະເໜີ

ໃນປະຈຸບັນ ການດຳລົງຊີວິດໃນສັງຄົມສ່ວນໃຫ່ຍ ແມ່ນມັກຈະໝັ້ນໃຈໃນຖານະຂອງຕົນເອງ ແລະ ຂາດສະຕິ ຕໍ່ການວາງແຜນທາງການເງິນ ຊຶ່ງເປັນຜົນອັນນຳມາສູ່ ຄວາມສ່ຽງທີ່ຈະທີ່ສົ່ງຜົນກະທົບຕໍ່ຖານະທາງການເງິນເຮັດ ໃຫ້ຄວາມມັ່ງຄັ່ງຫຼຸດລົງ ແລະ ຍັງມີມຸມມອງທີ່ເບິ່ງວ່າການ ວາງແຜນທາງການເງິນເປັນເລື່ອງທີ່ຫຍຸ້ງຍາກ ແລະ ບໍ່ໃສ່ ໃຈທີ່ຈະວາງແຜນ, ແຕ່ຖ້າບໍ່ມີການວາງແຜນກໍ່ຈະຍິ່ງເຮັດ ໃຫ້ເກີດມີຄວາມສ່ຽງຫຼາຍຂຶ້ນໃນການບໍລິຫານການເງິນ ຂອງຕົວເອງເມື່ອພົບກັບວິກິດການທາງດ້ານການເງິນ. ສະ ນັ້ນ, ການວາງແຜນທາງການເງິນຈຶ່ງປຽບເໝືອນແຜນ ທີ່ໆ ຈະນຳທາງໃຫ້ບຸກຄົນໄປສູ່ຈຸດໝາຍໄດ້ຢ່າງມີປະສິດທິພາບ, ເຊິ່ງຖ້າຍິ່ງວາງແຜນໄວເທົ່າໃດກໍ່ຍິ່ງເຖິງຈຸດໝາຍໄດ້ໄວຂຶ້ນ ເທົ່ານັ້ນ, ການວາງແຜນການເງິນທີ່ດີນັ້ນຕ້ອງ ມີການວາງ ແຜນ ແລະ ບໍລິຫານລາຍຮັບ-ລາຍຈ່າຍ ແລະ ນຳເງິນໄປລົງ ທຶນເພື່ອໃຫ້ຄວາມໝັ້ນຄົງທາງການເງິນໃນອານາຄົດ, ໃນ ການວາງແຜນທາງການເງິນສ່ວນບຸກຄົນເປັນວັດທະນະທຳ ອັນໜຶ່ງຂອງມະນຸດຊາດ ແລະ ເປັນສ່ວນໜຶ່ງຂອງຊີວິດ, ມະນຸດທຸກຄົນກໍ່ລ້ວນແລ້ວແຕ່ປາດຖະໜາຢາກຈະປະສົບ ຜົນສຳເລັດໃນຊີວິດເຊິ່ງຄວາມຄາດຫວັງຂອງແຕ່ລະຄົນກໍ່ມີ ຄວາມແຕກຕ່າງກັນໄປ, ບາງຄົນຕ້ອງການມີລະດັບການ ສຶກສາ, ມີອາຊີບທີ່ຈະເລີນກ້າວໜ້າ, ບາງຄົນກໍ່ພຽງແຕ່ໃຫ້ ຊີວິດຢູ່ລອດ ແລະ ມີຄວາມສຸກສະບາຍໃນຍາມແກ່ເຖົ້າກໍ່ ພຽງພໍ ເຖິງແມ່ນວ່າຄວາມຕ້ອງການເງິນຂອງແຕ່ລະຄົນມີ ຄວາມແຕກຕ່າງກັນໄປ ແຕ່ກໍ່ມີຈຸດປະສົງ ແລະ ເປົ້າໝາຍ ອັນດຽວກັນກໍ່ຄື ເປັນຫຼັກປະກັນໃຫ້ແກ່ຄອບຄົວ ກຽມ ພ້ອມໃນຍາມສຸກເສີນ ແລະຄ່າໃຊ້ຈ່າຍໃນຊີວິດປະຈຳວັນ ແລະ ອານາຄົດ.

ການດຳເນີນຊີວິດຂອງທຸກຄົນສ່ວນໃຫຍ່ມີສ່ວນ ກ່ຽວຂ້ອງກັບການຫາລາຍໄດ້ ແລະ ຄ່າໃຊ້ຈ່າຍໃນຊີວິດປະ ຈຳວັນ ດັ່ງນັ້ນ, ຈຶ່ງເກີດບັນຫາຕາມມາວ່າ ທຸກຄົນຄວນຈະ ເຮັດແນວໃດເພື່ອໃຫ້ມີເງິນສຳຮອງເກັບໄວ້ສຳລັບອະນາຄົດ ຫລື ສາມາດຈັບຈ່າຍໃຊ້ສອຍຢ່າງບໍ່ຂາດແຄນ ມີຊີວິດທີ່ ສຸກສະບາຍໃນເມື່ອເຈັບເປັນ, ກະສຽນອາຍຸ ມີເງິນໃຊ້ຍາມ ສຸກເສີນ ແລະ ມີເງິນສະສົມສຳລັບທຶນການສຶກສາຂອງລູກ ຫຼານ ເຊິ່ງບໍ່ພຽງແຕ່ຈະຕ້ອງມີວິທີໃນການສະສົມເທົ່ານັ້ນ ແຕ່ຍັງຕ້ອງມີແຜນການລົງທຶນທີ່ດີ ແລະ ມີປະສິດທິພາບ ພຽງພໍທີ່ຈະເຮັດໃຫ້ສາມາດປະເຊີນກັບບັນຫາຕ່າງໆໄດ້ ເຊັ່ນ: ພາສີ, ເງິນເຟີ້ ແລະ ຄ່າໃຊ້ຈ່າຍອື່ນໆ ເພື່ອຕອບສະໜ ອງຄວາມຕ້ອງການຂອງບຸກຄົນເອງ ເຊິ່ງເປັນຕົ້ນເຫດທີ່ ເຮັດໃຫ້ຊັບສິນທີ່ມີບໍ່ສາມາດເພີ່ມພູນຂຶ້ນໄດ້

ການວາງແຜນທາງການເງິນເປັນສິ່ງທີ່ຈຳເປັນສຳລັບ ພະນັກງານທີ່ມີລາຍຮັບບໍ່ຫລາຍຈາກເງິນເດືອນປະຈຳ ແລະ ຈະຍິ່ງມີຄວາມຈຳເປັນຫລາຍຂຶ້ນໃນອະນາຄົດຂ້າງໜ້າ ເນື່ອງຈາກຊີວິດມີຄວາມບໍ່ແນ່ນອນຫລາຍຂຶ້ນ ເພາະວ່າ ການສະສົມເງິນນັ້ນຈະສາມາດບົ່ງບອກເຖິງຄວາມມີຖານະ ທາງຄອບຄົວໄດ້ເປັນຢ່າງດີ. ສະນັ້ນ, ການສະສົມຈຶ່ງເປັນສິ່ງ ທີ່ສຳຄັນໃນການດຳລົງຊີວິດ, ການໃຊ້ຈ່າຍຕ່າງໆຕ້ອງຢູ່ໃນ ຂັ້ນພຽງພໍໄດ້ມາເທົ່າໃດກໍ່ຈ່າຍໄປສ່ວນໜຶ່ງ ແຕ່ສ່ວນໜຶ່ງກໍ່ ຕ້ອງສະສົມໄວ້ເພື່ອເປັນທຶນສົ່ງເສີມການສຶກສາໃຫ້ແກ່ລູກ-ຫຼານເຮັດໃຫ້ຊີວິດການເປັນຢູ່ຂອງຄອບຄົວພະນັກງານດີ ຂຶ້ນ, ນອກຈາກນັ້ນການສະສົມເງິນຍັງເປັນສິ່ງໜຶ່ງທີ່ຈະ ຊ່ວຍໃຫ້ພະນັກງານມີຊີວິດທີ່ດີຂຶ້ນໃນເວລາກະສຽນອາຍຸ.

## 2. ວິທີການດຳເນີນການຄົ້ນຄວ້າ

### 2.1 ເຄື່ອງມືໃນການຄົ້ນຄວ້າ

ຜູ້ສຶກສາໄດ້ມາຈາກການສັງເກດ ແລະ ການລົງເກັບ ກຳກຸ່ມຕົວຢ່າງໂດຍກົງຈາກການນຳໃຊ້ແບບສອບຖາມເຊິ່ງ ປະກອບມີ:

**ສ່ວນທີ 1**: ເປັນຄຳຖາມກ່ຽວກັບຂໍ້ມູນປັດໄຈສ່ວນ ບຸກຄົນຂອງກຸ່ມຕົວຢ່າງທີ່ພະນັກງານທະນາຄານການຄ້າ ຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ປະກອບມີ ເພດ, ອາຍຸ, ສະຖານະພາບ, ລະດັບການສຶກສາ, ຕຳແໜ່ງ, ໄລຍະເວລາໃນການເຮັດວຽກ, ລາຍຮັບ ແລະ ລາຍຈ່າຍຕໍ່ ເດືອນ, ແລະ ຈຳນວນສະມາຊິກໃນຄອບຄົວ.

**ສ່ວນທີ 2**: ຂໍ້ມູນກ່ຽວພຶດຕິກຳການວາງແຜນການ ເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ປະກອບມີພຶດຕິ ກຳການໃຊ້ຈ່າຍເງິນ, ການວາງແຜນການຊື້ ຫຼື ຖືຄອງຊັບ ສິນ, ການວາງແຜນໃນດ້ານຂອງໜີ້ສິນ, ການວາງແຜນ ການອອມ ແລະ ການລົງທຶນ, ການວາງແຜນການກະສຽນ,

ແລະ ການບໍລິຫານຄວາມສ່ຽງ.

**ສ່ວນທີ 3**: ຂໍ້ມູນກ່ຽວກັບການວາງແຜນການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ປະກອບມີປັດໄຈພາຍໃນ (ຄຸນລັກສະນະສ່ວນບຸກຄົນ, ລາຍໄດ້ສ່ວນບຸກຄົນ, ລາຍຈ່າຍສ່ວນບຸກຄົນ, ຈຸປະສົງການວາງແຜນທາງການເງິນ , ແລະ ຄວາມຮູ້ໃນການວາງແຜນທາງການເງິນ), ແລະ ປັດໄຈພາຍນອກ (ດ້ານການເມືອງ, ດ້ານເສດຖະກິດ, ດ້ານສັງຄົມ, ແລະ ດ້ານເຕັກໂນໂລຊີ.

**ສ່ວນທີ 4**: ຂໍ້ມູນກ່ຽວກັບປັດໄຈທີ່ມີປັດໄຈທີ່ມີອິດທິພົນໃນການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ

## 2.2 ຂໍ້ມູນທີ່ໃຊ້ເຂົ້າໃນການຄົ້ນຄວ້າ

ຂໍ້ມູນທີ່ໃນການວິໄຈຄັ້ງນີ້ຄະນະຜູ້ວິໄຈໄດ້ນຳມາຈາກ 2 ແຫຼ່ງຕົ້ນຕໍດັ່ງນີ້: ຂໍ້ມູນປະຖົມພູມ (ຂໍ້ມູນຂັ້ນໜຶ່ງ) ແລະ ຂໍ້ມູນທຸຕິຍະພູມ (ຂໍ້ມູນຂັ້ນສອງ)

### 2.2.1 ຂໍ້ມູນປະຖົມພູມ

ເປັນແຫຼ່ງຂໍ້ມູນທີ່ຜູ້ສຶກສາໄດ້ມາຈາກການສັງເກດ ແລະ ການລົງເກັບກຳກຸ່ມຕົວຢ່າງໂດຍກົງຈາກການນຳໃຊ້ແບບສອບຖາມຈາກພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ

### 2.2.2 ຂໍ້ມູນທຸຕິຍະພູມ

ເປັນຂໍ້ມູນທີ່ໄດ້ມາຈາກການສຶກສາເອກະສານຕ່າງໆ, ບົດລາຍງານ, ບົດວິໄຈທີ່ກ່ຽວຂອງກັບບົດວິໄຈການດັ່ງກ່າວ ແລະ ບັນດາແນວຄວາມຄິດຕ່າງໆເຊັ່ນ: ຈຳນວນພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ, ນອກຈາກນີ້ຍັງປະກອບມີທິດສະດີຕ່າງໆເຊັ່ນ: ທິດສະດີການວາງແຜນທາງການເງິນ, ປະເພດການວາງແຜນທາງການເງິນ.

## 2.3 ແບບຈຳລອງທີ່ໃຊ້ເຂົ້າໃນການສຶກສາ

ສະຖິຕິການວິເຄາະການທົດຖອຍພະຫຸຄູນ (Multiple Regression) ໂດຍໃຊ້ການວິເຄາະຄວາມທົດຖອຍພະຫຸຄູນ (Multiple Regression Analysis) ໂດຍໃຊ້ສູດລຸ່ມນີ້:

ສົມຜົນໃນຮູບຂອງປະຊາກອນ $Yi = \beta_O + \beta_1 X_2 + \beta_2 X_2 + \cdots + \beta_K X_K + \mathcal{E}$

ສົມຜົນໃນຮູບຂອງກຸ່ມຕົວຢ່າງ $Yi = \beta_O + \beta_1 X_2 + \beta_2 X_2 + \cdots + \beta_K X_K + e$

ສົມຜົນການພະຍາກອນ $\hat{Y} = \beta_O + \beta_1 X_2 + \beta_2 X_2 + \cdots + \beta_K X_K$

ໂດຍ: $Y_i$ ແທນ ຕົວແປຕາມທີ່ i.

$X_i$ ແທນ ຕົວແປອິດສະຫລະທີ່ i.

$\beta_O$ ແທນ ຄ່າຄົງທີ່ (Constant) ຂອງການທົດຖອຍຈະໃຊ້ສັນຍາລັກສຳລັບສົມຜົນຕົວຢ່າງ.

e ແທນຄວາມຄາດເຄື່ອນທີ່ເກີດຈາກຕົວຢ່າງລະຫວ່າງຄ່າແທ້ຈິງ Y ແລະ ຄ່າທີ່ໄດ້ຈາກສົມຜົນ $\hat{Y}$(Y hat).

$\beta_1$ແທນ ຄ່າສຳປະສິດທົດຖອຍ (Regression Coefficient) ຂອງຕົວແປອິດສະຫລະທີ່ i(x) ແລະ ໃຊ້ສັນຍາລັກ $\beta_1$ສຳລັບຄ່າສຳປະສິດທົດຖອຍຄົງທີ່ໃນຮູບຂອງສົມຜົນຕົວຢ່າງ

## 2.4 ວິທີການວິເຄະຂໍ້ມູນ

ການສຶກສາຄົ້ນຄວ້າຄັ້ງນີ້ແມ່ນວິເຄາະຂໍ້ມູນທາງສະຖິຕິດ້ວຍໂປຣແກຣມສຳເລັດຮູບທາງສະຖິຕິ ໂດຍໄດ້ນຳຂໍ້ມູນຈາກແບບສອບຖາມທີ່ລົງເກັບລວບລວມໄດ້ຕົວຈິງມາລົງລະຫັດເປັນຕົວເລກ (Code) ຕາມທີ່ໄດ້ກຳນົດໄວ້ສຳຫລັບຂໍ້ຄຳຖາມທີ່ເປັນແບບປາຍປິດ, ແລ້ວບັນທຶກລົງໃນໂປຣແກຣມ ເພື່ອດຳເນີນການວິເຄາະຂໍ້ມູນທາງສະຖິຕິເຊັ່ນ: ຄ່າຄວາມຖີ່, ຈຳນວນ, ຄ່າສ່ວນຮ້ອຍ, ຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຖານ (S.D Deviation), ຄ່າສຳປະສິດສະຫະສຳພັນພະຫຸຄູນ ເຊິ່ງຈະວິເຄາະໂດຍແຍກຕາມສ່ວນຂອງແບບສອບຖາມດັ່ງນີ້:

1. ການວິເຄາະຂໍ້ມູນສະຖານະພາບສ່ວນບຸກຄົນຂອງຜູ້ຕອບແບບສອບຖາມ ຈາກແບບສອບຖາມສ່ວນທີ່ 1 ເຊິ່ງມີລັກສະນະເປັນແບບເລືອກຕອບລາຍການ (Check List) ແມ່ນໃຊ້ວິທີການຫາຄ່າຄວາມຖີ່ ແລະ ຄ່າສ່ວນຮ້ອຍ.

2. ວິເຄາະຂໍ້ມູນສະພາບການປະຕິບັດວຽກງານຂອງພະນັກງານທະນາຄານພັດທະນາລາວ ສາຂາແຂວງຫລວງພະບາງ ຈາກແບບສອບຖາມສ່ວນທີ່ 2 ເຊິ່ງມີລັກສະນະເປັນແບບເລືອກຕອບລາຍການ (Check List) ແມ່ນໃຊ້ວິທີການຫາຄ່າຄວາມຖີ່ ແລະ ຄ່າສ່ວນຮ້ອຍ.

3. ການວິເຄາະຂໍ້ມູນຄວາມຄິດເຫັນຂອງພະນັກງານຕໍ່ການໃຫ້ຄວາມສຳຄັນຂອງປັດໃຈທີ່ສົ່ງຜົນ ຈາກແບບສອບຖາມສ່ວນທີ່ 3 ເຊິ່ງມີລັກສະນະຂອງຄຳຖາມຈະເປັນແບບມາດຕາສ່ວນປະມານຄ່າ 5 ລະດັບ (Scale Rating) ແມ່ນໃຊ້ວິທີການຄິດໄລ່ຫາຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຕະຖານ (Standard Deviation: S.D).

4. ການວິເຄາະຂໍ້ມູນຄວາມສາມາດໃນການປະຕິບັດງານຂອງພະນັກງານ ຈາກແບບສອບຖາມສ່ວນທີ່ 4 ເຊິ່ງມີລັກສະນະຂອງຄຳຖາມຈະເປັນແບບມາດຕາສ່ວນປະມານຄ່າ 5 ລະດັບ (Scale Rating) ແມ່ນໃຊ້ວິທີການຄິດໄລ່ຫາຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຕະຖານ (Standard Deviation: S.D).

5.ການວິເຄາະລະດັບຄວາມຄິດເຫັນຂອງອິດທິພົນປັດໄຈທີ່ສົ່ງຜົນຕໍ່ຄວາມສາມາດໃນການປະຕິບັດງານຂອງພະນັກງານ ທະນາຄານພັດທະນາລາວ ສາຂາແຂວງຫລວງພະບາງແມ່ນໃຊ້ວິທີການວິເຄາະຫາຄ່າສຳພະສິດສະຫະສຳພັນເພຍສັນ (Pearson's product moment correlation coefficient) ເພື່ອໃຊ້ເປັນຂໍ້ມູນພື້ນຖານຂອງການວິເຄາະລະດັບຄວາມຄິດເຫັນຂອງອິດທິພົນປັດໄຈທີ່ສົ່ງຜົນຕໍ່ຄວາມສາມາດໃນການປະຕິບັດງານຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ, ສົມຜົນການວິເຄາະແບບທົດຖອຍແບບພະຫຸຄູນ (Multiple Correlation : R)", ຄ່າສຳປະສິດສະຫະສຳພັນພະຫຸຄູນ ($R^2$), ຄ່າສຳປະສິດສະຫະສຳພັນພະຫຸຄູນທີ່ປັບແກ້ແລ້ວ (Adjusted $R^2$) ແລະ ຄ່າຄາດເຄື່ອນທີ່ເກີດຈາກການໃຊ້ຕົວປ່ຽນອິດສະຫລະທັງຫມົດໄປພະຍາກອນຕົວປ່ຽນຕາມ (S.D Error of Estimate).

## 3. ຜົນການສຶກສາ

### 3.1. ພຶດຕິກຳໃນການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ ສາຂາຫຼວງພະບາງ

ຈາກຜົນຂອງການສຶກສາເຫັນວ່າກຸ່ມຕົວຢ່າງພະນັກງານທະນາຄານການຄ້າຕ່າງປະເທດລາວ ສາຂານະຫຼວງພະບາງສ່ວນຫຼາຍແມ່ນເພດຊາຍຫລາຍກວ່າເພດຍິງ, ໂດຍສ່ວນຫລາຍມີອາຍຸສະເລ່ຍ ໃນລະຫວ່າງ 31-40 ປີ ມີຈຳນວນ 69 ຄົນກວມເອົາ 70.4%, ມີລະດັບການສຶກສາປະລິນຍາຕີ ມີຈຳນວນ 76 ຄົນ ກວມເອົາ 77.6%, ແມ່ນຫົວໜ້າຂະແໜງ ມີຈຳນວນ 42 ຄົນກວມເອົາ 41.8%, ແລະ ພະນັກງານວິຊາການ ມີຈຳນວນ 42 ຄົນກວມເອົາ 41.8%, ມີໄລຍະການເຮັດວຽກ 11-15 ປີ ມີຈຳນວນ 52 ຄົນກວມເອົາ 53.1, ລາຍໄດ້ສະເລ່ຍຕໍ່ເດືອນສ່ວນໃຫຍ່ແມ່ນ 2.800.000-5.000.000 ກີບ ມີຈຳນວນ 35 ຄົນກວມເອົາ 35.7%, ລາຍຈ່າຍສະເລ່ຍຕໍ່ເດືອນສ່ວນໃຫຍ່ແມ່ນຫຼາຍກ່ວາ 5.000.000 ກີບ ມີຈຳນວນ 30 ຄົນກວມເອົາ 30.6%, ແລະ ຈຳນວນສະມາຊິກໃນຄອບຄົວສ່ວນໃຫຍ່ແມ່ນມີ 5 ຄົນ ມີຈຳນວນ 31 ຄົນກວມເອົາ 31.6

ຜົນຈາກການວິເຄາະຂໍ້ມູນສະພາບການແຂ່ງຂັນພາຍນອກໂດຍລວມແລ້ວ ມີຄວາມສຳຄັນໃນລະດັບຫຼາຍ, ເຊິ່ງມີຄ່າສະເລ່ຍເທົ່າກັບ 4.15 ແລະ ຄ່າຜັນປ່ຽນມາດຕະຖານ 0.83. ເມື່ອພິຈາລະນາລາຍລະອຽດແລ້ວເຫັນວ່າ ຜູ້ປະກອບການສ່ວນຫຼາຍແມ່ນເຫັນວ່າ ປັດໄຈດ້ານເສດຖະກິດ ມີລະດັບຄວາມສຳຄັນຫຼາຍທີ່ສຸດ ມີຄ່າສະເລ່ຍ 4.37 ແລະ ຄ່າຜັນປ່ຽນມາດຕະຖານ 0.67, ປັດໄຈດ້ານການເມືອງ ມີລະດັບຄວາມສຳຄັນຫຼາຍທີ່ສຸດ ມີຄ່າສະເລ່ຍ 4.23 ແລະ ມີຄ່າຜັນປ່ຽນມາດຕະຖານ 0.98 ແລະ ໄພຄຸກຄາມຈາກຜະລິດຕະພັນທົດແທນ ລະດັບຄວາມສຳຄັນຫຼາຍທີ່ສຸດ ມີຄ່າສະເລ່ຍ 4.23 ແລະ ມີຄ່າຜັນປ່ຽນມາດຕະຖານ 0.92, ຮອງລົງມາແມ່ນການແຂ່ງຂັນຂອງທຸລະກິດປະເພດດຽວກັນ ຢູ່ໃນລະດັບຫຼາຍທີ່ສຸດ ມີຄ່າສະເລ່ຍ 4.21 ແລະ ຄ່າຜັນປ່ຽນມາດຕະຖານ 0.09, ປັດໄຈດ້ານວັດທະນາທຳ ແລະ ສັງຄົມ ແລະ ປັດໄຈດ້ານເຕັກໂນໂລຊີ ຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 4.14 ແລະ ຄ່າຜັນປ່ຽນມາດຕະຖານ 0.95, ອຳນາດຕໍ່ລອງຂອງຜູ້ຊື້ ຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 4.05 ແລະ ຄ່າຜັນປ່ຽນມາດຕະຖານ 0.74, ການເຂົ້າສູ່ທຸລະກິດຂອງຄູ່ແຂ່ງລາຍໃໝ່ ໃນລະດັບຫຼາຍ ມີຄ່າສະເລ່ຍ 4.04 ແລະ ຄ່າຜັນປ່ຽນມາດຕະຖານ 0.93, ແລະ ອຳນາດຕໍ່ລອງຜູ້ຂາຍປັດໄຈການຜະລິດ ໃນລະດັບຫຼາຍ ມີຄ່າສະເລ່ຍ 3.99 ແລະ ຄ່າຜັນປ່ຽນມາດຕະຖານ 0.65.

### 3.2 ລະດັບປັດໄຈທີ່ມີອິດທິພົນຕໍ່ກັບການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານ

**ການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ**

### 3.2.1 ລະດັບປັດໄຈພາຍໃນທີ່ມີອິດທິພົນຕໍ່ກັບການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ

ຜົນຈາກການວິເຄາະຂໍ້ມູນດ້ານປັດໄຈພາຍໃນໂດຍລວມແລ້ວຢູ່ໃນລະດັບຫຼາຍ, ເຊິ່ງມີຄ່າສະເລ່ຍເທົ່າກັບ 4.08 ແລະ ຄ່າຜັນປ່ຽນມາດຕະຖານ 0.94. ເມື່ອພິຈາລະນາລາຍລະອຽດແລ້ວເຫັນວ່າ ຜູ້ປະກອບການສ່ວນຫຼາຍແມ່ນເຫັນວ່າ ດ້ານການເງິນ ມີລະດັບຄວາມສຳຄັນຫຼາຍ ມີຄ່າສະເລ່ຍ 4.20 ແລະ ຄ່າຜັນປ່ຽນມາດຕະຖານ 0.95, ດ້ານການວິໄຈ ແລະ ພັດທະນາ ມີລະດັບຄວາມສຳຄັນຫຼາຍ ມີຄ່າສະເລ່ຍ 4.18 ແລະ ຄ່າຜັນປ່ຽນມາດຕະຖານ 0.97, ດ້ານການບໍລິຫານ ມີລະດັບຄວາມສຳຄັນຫຼາຍ ມີຄ່າສະເລ່ຍ 4.08 ແລະ ມີຄ່າຜັນປ່ຽນມາດຕະຖານ 0.86, ດ້ານການຜະລິດ ແລະ ການບໍລິການ ຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 4.00 ແລະ ຄ່າຜັນປ່ຽນມາດຕະຖານ 0.99, ແລະ ດ້ານການຕະຫຼາດ ມີລະດັບຄວາມສຳຄັນຫຼາຍ ມີຄ່າສະເລ່ຍ 3.95 ແລະ ຄ່າຜັນປ່ຽນມາດຕະຖານ 0.97.

### 3.2.2 ລະດັບປັດໄຈພາຍນອກທີ່ມີອິດທິພົນຕໍ່ກັບການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ

ຜົນຈາກການວິເຄາະຂໍ້ມູນດ້ານປັດໄຈພາຍນອກໂດຍລວມແລ້ວຢູ່ໃນລະດັບຫຼາຍ, ເຊິ່ງມີຄ່າສະເລ່ຍເທົ່າກັບ 3.81 ແລະ ຄ່າຜັນປ່ຽນມາດຕະຖານ 0.79. ເມື່ອພິຈາລະນາລາຍລະອຽດແລ້ວເຫັນວ່າ ຜູ້ປະກອບການສ່ວນຫຼາຍແມ່ນເຫັນວ່າ ດ້ານເສດຖະກິດ ມີລະດັບຄວາມສຳຄັນຫຼາຍ ມີຄ່າສະເລ່ຍ 3.95 ແລະ ຄ່າຜັນປ່ຽນມາດຕະຖານ 0.81, ຮອງລົງມາແມ່ນດ້ານເຕັກໂນໂລຊີ ມີລະດັບຄວາມສຳຄັນຫຼາຍ ມີຄ່າສະເລ່ຍ 3.83 ແລະ ຄ່າຜັນປ່ຽນມາດຕະຖານ 0.77, ໃນນັ້ນດ້ານສັງຄົມ ມີລະດັບຄວາມສຳຄັນຫຼາຍ ມີຄ່າສະເລ່ຍ 3.77 ແລະ ມີຄ່າຜັນປ່ຽນມາດຕະຖານ 0.74, ແລະ ດ້ານການເມືອງ ມີລະດັບຄວາມສຳຄັນຫຼາຍ ມີຄ່າສະເລ່ຍ 3.70 ແລະ ຄ່າຜັນປ່ຽນມາດຕະຖານ 0.87.

## 3.3. ສຶກສາຄວາມສຳພັນລະຫວ່າງປັດໄຈທີ່ສົ່ງຜົນຕໍ່ກັບຈຸດປະສົງການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ

### 3.3.1 ສຶກສາຄວາມສຳພັນລະຫວ່າງປັດໄຈພາຍໃນ ຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ

ຜົນການວິເຄາະເຫັນວ່າ: ປັດໄຈທີ່ສົ່ງຜົນຕໍ່ຈຸດປະສົງການວາງແຜນການເງິນສ່ວນບຸກຄົນຂອງພະນັກງານທະນາຄານ ທັງໝົດ 8 ຕົວປ່ຽນ ແມ່ນມີຄວາມສຳພັນກັບຈຸດປະສົງການວາງແຜນການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ (Y) ຢູ່ໃນລະດັບປານກາງ (R = 0,769) ແລະ ມີ 3 ປັດໄຈ ແມ່ນສາມາດອະທິບາຍ ຫຼື ພະຍາກອນຈຸດປະສົງການວາງແຜນການເງິນສ່ວນບຸກຄົນຂອງພະນັກງານທະນາຄານ ໄດ້ເຖິງ 59,2% ຫຼື ມີຜົນພຽງແຕ່ 59,2% (R Square = .592) ສ່ວນທີ່ເຫຼືອອີກ 41,8% ແມ່ນເປັນຜົນຈາກຕົວປ່ຽນອື່ນໆ ທີ່ບໍ່ໄດ້ນຳມາວິເຄາະໃນການຄົ້ນຄວ້າຄັ້ງນີ້ ດ້ວຍລະດັບຄວາມຄາດເຄື່ອນຂອງການປະເມີນ Std. Error = 38,78% ເຊິ່ງໝາຍເຖິງຄວາມຜິດພາດທີ່ເກີດຈາກການພະຍາກອນໂດຍສະເລ່ຍ ແລະ ພົບວ່າມີພຽງ 3 ປັດໄຈທີ່ມີຄວາມສຳພັນກັນໃນລະດັບຄວາມສຳຄັນທາງສະຖິຕິ 0.05 ຄື: ປັດໄຈລາຍໄດ້ສ່ວນບຸກຄົນ (X2) ມີຄ່າ $\beta = 0{,}188$, ປັດໄຈດ້ານການເມືອງ (X5) ມີຄ່າ $\beta = 0{,}321$ ແລະ ປັດໄຈດ້ານວັດທະນະທຳ-ສັງຄົມ (X7) ມີຄ່າ $\beta = 0{,}247$ ໃນການຄົ້ນຄວ້າຄັ້ງນີ້ມີສົມຜົນພະຍາກອນຈຸດປະສົງການວາງແຜນການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ຄື:

ສົມຜົນການພະຍາກອນຈຸດປະສົງການວາງແຜນການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ໃນຮູບຂອງການນຳໃຊ້ຄ່າຄະແນນດິບມີດັ່ງນີ້:

$$Y = 0{,}338 + 0{,}188\ X_2 + 0{,}321\ X_5 + 0{,}247\ X_7$$

ສົມຜົນສົມຜົນພະຍາກອນຈຸດປະສົງການວາງແຜນການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ໃນຮູບຂອງການນຳໃຊ້ຄ່າຄະແນນມາດຕະຖານມີຄື:

$$Z_{Y1} = 0{,}233\ X_2 + 0{,}361\ X_5 + 0{,}232\ X_7$$

ຈາກຜົນການວິເຄາະສົມຜົນການທົດຖອຍແບບພະຫຸຄູນ ດ້ວຍເຕັກນິກ Enter ສາມາດອະທິບາຍການພະຍາກອນສົມຜົນຂອງຈຸດປະສົງການວາງແຜນການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະ ເທດລາວ ມະຫາຊົນ ສາຂາຫຼວງພະບາງ ໂດຍການຈັດລຳດັບປັດໄຈທີ່ມີຄວາມສຳພັນແຕ່ໃຫຍ່ຫານ້ອຍ ໄດ້ດັ່ງນີ້:

1) ຖ້າຫາກປັດໄຈລາຍໄດ້ສ່ວນບຸກຄົນ (X2) ປ່ຽນແປງຂຶ້ນ 1 ລະດັບ ກໍ່ຈະມີຜົນຕໍ່ຈຸດປະສົງການວາງແຜນການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ 0,233 ລະດັບເຊັ່ນກັນ, ແຕ່ໃນກົງກັນຂ້າມຖ້າຫາກປັດໄຈລາຍໄດ້ສ່ວນບຸກຄົນ (X2) ປ່ຽນແປງລົງ 1 ລະດັບ ກໍ່ຈະສົ່ງຜົນຕໍ່ລະດັບຈຸດປະສົງການວາງແຜນການເງິນສ່ວນບຸກຄົນ ຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ປ່ຽນແປງລົງ 0,233 ລະດັບເຊັ່ນກັນ ໃນຂະນະທີ່ປັດໄຈດ້ານອື່ນບໍ່ປ່ຽນແປງ.

2) ຖ້າຫາກປັດໄຈດ້ານການເມືອງ (X5) ປ່ຽນແປງຂຶ້ນ 1 ລະດັບ ກໍ່ຈະມີຜົນຕໍ່ຈຸດປະສົງການວາງແຜນການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ 0.361 ລະດັບເຊັ່ນກັນ, ແຕ່ໃນກົງກັນຂ້າມຖ້າຫາກປັດໄຈດ້ານການເມືອງ (X5) ປ່ຽນແປງລົງ 1 ລະດັບ ກໍ່ຈະສົ່ງຜົນຕໍ່ລະດັບຈຸດປະສົງການວາງແຜນການເງິນສ່ວນບຸກຄົນ ຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ປ່ຽນແປງລົງ 0,233 ລະດັບເຊັ່ນກັນ ໃນຂະນະທີ່ປັດໄຈດ້ານອື່ນບໍ່ປ່ຽນແປງ.

3) ຖ້າຫາກປັດໄຈດ້ານວັດທະນະທຳ-ສັງຄົມ (X7) ປ່ຽນແປງຂຶ້ນ 1 ລະດັບ ກໍ່ຈະມີຜົນຕໍ່ຈຸດປະສົງການວາງແຜນການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ 0,232 ລະດັບເຊັ່ນກັນ, ແຕ່ໃນກົງກັນຂ້າມຖ້າຫາກປັດໄຈດ້ານວັດທະນະທຳ-ສັງຄົມ (X7) ປ່ຽນແປງລົງ 1 ລະດັບ ກໍ່ຈະສົ່ງຜົນຕໍ່ລະດັບຈຸດປະສົງການວາງແຜນການເງິນສ່ວນບຸກຄົນ ຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ປ່ຽນແປງລົງ 0,232 ລະດັບເຊັ່ນກັນ ໃນຂະນະທີ່ປັດໄຈດ້ານອື່ນບໍ່ປ່ຽນແປງ.

## 4. ວິພາກຜົນ

### 4.1. ພຶດຕິກຳໃນການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າ ຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ

ຈາກການສຶກສາພົບວ່າພຶດຕິກຳໃນການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ສ່ວນໃຫຍ່ແມ່ນມີພຶດຕິກຳການວາງແຜນການເງິນດ້ວຍຕົນເອງ, ບຸກຄົນທີ່ສົ່ງຜົນຫຼາຍສຸດຕໍ່ການວາງແຜນແມ່ນຄອບຄົວ, ມີຮູບແບບການວາງແຜນທາງການເງິນຝາກໄວ້ກັບທະນາຄານ ຫຼື ສາຖາບັນການເງິນ, ຈຸດປະສົງຫຼັກໃນການວາງແຜນທາງການເງິນເພື່ອໃຫ້ມີອິດສະຫຼະພາບທາງການເງິນ, ເປົ້າໝາຍໃນການວາງແຜນທາງການເງິນແມ່ນບໍລິຫານຄວາມສ່ຽງທີ່ຈະເກີດຂຶ້ນໃນອະນາຄົດ, ເປົ້າໝາຍການລົງທຶນແມ່ນສະຖຽນລະພາບຂອງລາຍໄດ້, ວາງແຜນທາງການເງິນໂດຍເລືອກລົງທຶນ, ແມ່ນລົງທຶນໃນທຸລະກິດ (ຊື້ທີ່ດິນ, ອາຄານ, ໂຮງງານ), ແລະ ປະເພດຂອງການວາງແຜນທາງການເງິນແມ່ນແຜນການອອມ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງສີສະຫວັນ ສຸພົມມະນີຈັນ (2012) ໄດ້ສຶກສາ ການວາງແຜນການເງິນສ່ວນບຸກຄົນຂອງນັກສຶກສາສະຖາບັນການ ເມືອງ ແລະ ການປົກຄອງແຫ່ງຊາດ (ມະຫາວິທະຍາໄລແຫ່ງຊາດ) ຜົນຂອງການສຶກສາເຫັນວ່າ: ດ້ານລາຍຮັບສະເລ່ຍຕໍ່ເດືອນແມ່ນຢູ່ລະຫວ່າງ 1,000,000-2,000,000 ກີບ, ລາຍຈ່າຍສະ ເລ່ຍຕໍ່ເດືອນແມ່ນ 500,001 ກີບຂຶ້ນໄປ, ເຊິ່ງສອດຄ່ອງກັບບົດຄຸ້ນຄົ້ວຂອງ ສາຍສະໝອນ ມັງໜໍ່ເມກ (2012) ໄດ້ສຶກສາ ການບໍລິຫານການເງິນສ່ວນບຸກຄົນຂອງພະນັກ ງານ ແລະ ອາຈານໃນ ມະຫາວິທະຍາໄລແຫ່ງຊາດ ກໍລະນີສຶກສາ: ວິທະຍາເຂດດົງໂດກ ມີຈຸດປະສົງເພື່ອວິເຄາະເຖິງຂໍ້ມູນການບໍລິຫານການເງິນສ່ວນບຸກຄົນໂດຍວິເຄາະ

ເຖິງແຫຼ່ງລາຍຮັບ, ລາຍຈ່າຍ ແລະ ການວິເຄາະສະສົມເງິນ ຫຼື ການລົງທຶນຂອງພະນັກງານ ແລະ ອາຈານໃນ ມະຫາວິທະ ຍາໄລແຫ່ງຊາດ ວິທະຍາເຂດດົງໂດກ ຜົນຂອງການສຶກສາພົບວ່າ: ກຸ່ມຕົວຢ່າງປະຊາກອນເປັນເພດຍິງຫຼາຍກວ່າ ເພດຊາຍ, ສ່ວນຫຼາຍຢູ່ລະຫວ່າງ 20-30 ປີ, ມີໄລຍະເວລາ ຂອງການເຮັດວຽກ 1-5 ປີຫຼາຍທີ່ສຸດ, ມີສະຖານະພາບ ແຕ່ງງານແລ້ວຫຼາຍທີ່ສຸດ, ມີຕຳ ແໜ່ງທັງເປັນອາຈານສອນ ແລະ ທັງເຮັດວຽກບໍລິຫານຫຼາຍທີ່ສຸດ ແລະ ມີລະດັບການ ສຶກສາປະລິນຍາຕີຫຼາຍທີ່ສຸດ, ກຸ່ມຕົວຢ່າງປະຊາກອນໂດຍ ສ່ວນຫຼາຍຈະມີລາຍຮັບຈາກເງິນເດືອນເປັນສ່ວນຫຼາຍ ເຊິ່ງ ເປັນລາຍຮັບຄົງທີ່ ແລະ ແນ່ນອນ ເຊິ່ງ ຈັນເພັງ ຈາປະເກດ (1980) ໃນໜັງສືການເງິນສ່ວນບຸກຄົນ ຊຶ່ງໜັງສືດັ່ງກ່າວ ໄດ້ເວົ້າວ່າ: ລາຍຮັບປະມານ 70% ຂອງລາຍຮັບສ່ວນ ບຸກຄົນທັງໝົດຈະໄດ້ເງິນເດືອນ ແລະ ໂດຍສ່ວນຫຼາຍເງິນ ເດືອນຕໍ່ເດືອນຢູ່ລະຫວ່າງ 700,001-900,000 ກີບ ນອກຈາກເງິນເດືອນແລ້ວຈະເປັນລາຍຮັບທີ່ບໍ່ແນ່ນອນເຊິ່ງ ເປັນລາຍຮັບຈາກການສຶກສາລະດັບປະລິນຍາຕີຕໍ່າກວ່າ 500,000 ກີບ, ປະລິນຍາໂທ 1,500,000-2,000,000 ກີບ ແລະ ລາຍຮັບຈາກເງິນອຸດໜູນຕຳແໜ່ງແມ່ນຂຶ້ນຢູ່ ກັບຕຳແໜ່ງທີ່ຖືກແຕ່ງຕັ້ງ ສ່ວນຫຼາຍໄດ້ຮັບຫຼາຍກວ່າ 100,000 ກີບ, ກຸ່ມຕົວຢ່າງໄດ້ເຮັດວຽກເສີມມີ 45%, ກຸ່ມຕົວຢ່າງປະຊາກອນ 66.3% ແມ່ນບໍ່ມີການວາງແຜນ ລາຍຮັບກຸ່ມຕົວຢ່າງປະຊາກອນໃຫ້ຄວາມສຳຄັນຫຼາຍກັບ ການໃຊ້ຈ່າຍເລື່ອງອາຫານການກິນ, ສະບູ, ຢາຖູແຂ້ວ ແລະ ອື່ນໆ 500,000-1,000,000 ກີບ ຕໍ່ເດືອນ, ບໍ່ມີການຜ່ອນ ຊື້. ການສະສົມເງິນສ່ວນໃຫຍ່ແມ່ນເພື່ອການສຶກສາໃຫ້ ລູກ, ຫຼານ ຫຼື ຄອບຄົວໃນຮູບແບບຂອງການສະສົມຫຼາຍ ແມ່ນການຝາກເງິນກັບທະນາຄານໃນຮູບແບບຝາກປະຢັດ. ແລະ ບໍ່ສອດຄ່ອງກັບບົດຄົ້ນຄ້ວາຂອງ Supanee Soporn (2005) ໄດ້ວິໄຈ ການວາງແຜນການເງິນເພື່ອທີ່ຢູ່ອາໄສ ຂອງບຸກຄະລາກອນທີ່ພັກອາໄສໃນຫໍພັກຂອງມະຫາວິທະຍາໄລຈຸລາລົງກອນ ໂດຍສຶກສາກຸ່ມຄົນໃນມະຫາວິທະຍາໄລ ໄດ້ແກ່ ພະນັກງານຂັບລົດ, ພະນັກງານຮັກສາຄວາມ ປອດໄພ ແລະ ຜູ້ໃຫ້ບໍລິການແຮງງານໃນມະຫາວິທະຍາໄລ ຜົນການສຶກສາພົບວ່າ 59% ຂອງປະຊາກອນມີການວາງແຜນການເງິນເພື່ອທີ່ຢູ່ອາໄສ, ໂດຍຜູ້ຕອບແບບສອບຖາມ ສ່ວນໃຫ່ຍເປັນເພດຊາຍມີອາຍຸໃນລະຫວ່າງ 41-50 ປີ ມີ ສະມາຊິກຄອບຄົວ 3 ຄົນ ແລະ ຈົບລະດັບການສຶກສາຊັ້ນ ປະຖົມເປັນສ່ວນໃຫຍ່, ມີລາຍໄດ້ສະເລ່ຍ 1,500 ບາດ, ມີ ພູມລຳເນົາຢູ່ຕ່າງແຂວງ; ນອກນັ້ນ 47.5% ຂອງຜູ້ທີ່ພັກ ອາໄສໃນຫໍພັກອາໄສມາດົນກວ່າ 10 ປີ ແລະ ກຸ່ມຕົວຢ່າງ ສ່ວນໃຫ່ຍຕ້ອງການຊື້ທີ່ຢູ່ອາໄສເປັນຂອງຕົນເອງ ໂດຍມີ ງົບປະມານຕັ້ງໄວ້ເພື່ອທີ່ຢູ່ອາໄສສະເລ່ຍ 639,535 ບາດ ໂດຍສະເລ່ຍ 97% ແມ່ນກູ້ຢືມເງິນຈາກທະນາຄານ, ສຳລັບ ຄ່າໃຊ້ຈ່າຍທີ່ພັກອາໄສແຕ່ລະເດືອນຢູ່ໃນລະຫວ່າງ 30%-50% ຂອງລາຍໄດ້ ໂດຍສ່ວນໃຫຍ່ໃຊ້ເວລາໃນການວາງ ແຜນ 1 ປີ; ດ້ານອຸປະສັກໃນການວາງແຜນເພື່ອທີ່ພັກອາໄສ ຫຼາຍທີ່ສຸດຄືຄ່າໃຊ້ຈ່າຍໃນຊີວິດປະຈຳວັນທີ່ສູງຂື້ນ, ລາຍ ໄດ້ບໍ່ພຽງພໍສຳລັບການວາງແຜນທີ່ພັກອາໄສໂດຍສ່ວນໃຫຍ່ ຈະຝາກເງິນໄວ້ກັບທະນາຄານ.

ຈາກການສຶກສາພົບວ່າ ຂໍ້ມູນກ່ຽວກັບການວາງ ແຜນການຊື້ ຫຼື ຄອບຄອງຊັບສິນ ປະເພດຂອງການແຜນ ການຊື້ ຫຼື ຄອບຄອງ ໂດຍສ່ວນຫຼາຍແມ່ນອະສັງລິມະຊັບ ເຊັ່ນ: ເຮືອນ, ດິນ ມູນຄ່າ, ການວາງແຜນໃນດ້ານຂອງໜີ້ ສິນ, ປະເພດຂອງໜີ້ສິນ ໂດຍສ່ວນຫຼາຍແມ່ນສິນເຊື່ອເພື່ອ ທີ່ຢູ່ອາໄສ, ໂດຍສ່ວນໃຫຍ່ຈຳນວນເງິນຄາດວ່າຈະສາມາດ ຜ່ອນຊຳລະໜີ້ສິນໄດ້ໃນແຕ່ລະເດືອນນ້ອຍກວ່າ 500,000 ກີບ, ລະດັບອັດຕາຄວາມສ່ຽງທີ່ສາມາດຍອມຮັບໄດ້ສຳລັບ ການອອມ ແລະ ການລົງທຶນ ລະດັບປານກາງ, ອັດຕາຜົນ ຕອບແທນທີ່ຕ້ອງການສຳລັບການອອມ ແລະ ການລົງທຶນ 5-10% ຕໍ່ປີ, ໄລຍະເວລາເທົ່າໃດທີ່ທ່ານຕ້ອງການບັນລຸ ເປົ້າໝາຍໃນການອອມ ຫຼື ການລົງທຶນ 3-6 ປີ, ວາງແຜນ ຈະສະສົມເງິນເພື່ອນຳໄປໃຊ້ຫຼັງກະສຽນ ເງິນອອມ, ວາງ ແຜນຈະສະສົມເງິນຈຳນວນຕໍ່ເດືອນເພື່ອນຳມາໃຊ້ຫຼັງກະ ສຽນ ຫຼາຍກ່ວາ 1,000,000 ກີບ, ວາງແຜນຈະວັດມາດ ຕະຖານການດຳລົງຊີວິດຂອງທ່ານຫຼັງກະສຽນ ອາຍຸເທົ່າ ເດີມ ຈຳນວນ 42 ຄົນ, ຮູບແບບໃນການວາງແຜນທາງ ການເງິນເນັ້ນຄວາມໝັ້ນຄົງທາງການເງິນ, ຮູບແບບການ ກະຈາຍຄວາມສ່ຽງ ນຳເງິນໄປລົງທຶນຊື້ອະສັງຫາລິມມະຊັບ, ແລະ ວິທີຈັດການກັບຄວາມສ່ຽງຄືການສຶກສາຂໍ້ມູນກ່ອນ

ການນຳເງິນໄປລົງທຶນຢ່າງລະອຽດ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງຄຳສະແຫວງ ແກ້ວບົວລະພາ (2011) ສຶກສາ: ການວາງແຜນການເງິນສ່ວນບຸກຄົນຂອງພະນັກງານສົ່ງເສີມກະສິກຳ ສຳນັກງານໃຫຍ່ ແລະ ໜ່ວຍບໍລິການທີ່ຂຶ້ນກັບສາຂານະຄອນຫຼວງວຽງຈັນ (ມະຫາວິທະຍາໄລແຫ່ງຊາດ) ຜົນຂອງການສຶກສາເຫັນໄດ້ວ່າ: ຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນມີການວາງແຜນໃນຮູບແບບການວາງແຜນການອອມ ແລະ ການລົງທຶນ, ຮອງລົງມາແມ່ນການຊື້ ຫຼື ຄອບຄອງຊັບສິນ. ການວາງແຜນຜົນປະໂຫຍດພະນັກງານ, ການວາງແຜນການກະສຽນ, ການວາງແຜນໃນດ້ານໜີ້ສິນ ແລະ ບໍ່ມີການວາງແຜນການເງິນສ່ວນບຸກຄົນຕາມລຳດັບ. ເມື່ອສຶກສາການວາງແຜນແຕ່ລະຮູບແບບເຫັນວ່າ: ການວາງແຜນການອອມ ແລະ ການລົງທຶນແມ່ນຢູ່ໃນທຸລະກິດສ່ວນຕົວ, ການວາງແຜນຊື້ ຫຼື ຄອບຄອງຊັບສິນທັງດ້ານອະສັງຫາ ລິມະຊັບ, ການວາງແຜນໃນດ້ານໜີ້ສິນສ່ວນໃຫຍ່ແມ່ນສິນເຊື່ອທີ່ຢູ່ອາໄສ, ການວາງແຜນການກະສຽນແມ່ນມີເງິນອອມມາຈາກແຫຼ່ງລາຍຮັບອື່ນໆ ແລະ ເຫດຜົນທີ່ບໍ່ມີການວາງແຜນການເງິນສ່ວນບຸກຄົນສ່ວນໃຫຍ່ແມ່ນບໍ່ສາມາດຄາດຄະເນລາຍຈ່າຍເງິນໃນອະນາຄົດໄດ້.

### 4.2. ປັດໄຈທີ່ມີອິດທິພົນຕໍ່ກັບການວາງແຜນທາງການເງິນສ່ວນບຸກຄົນ ຂອງພະນັກງານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ

ຈາກການສຶກສາພົບວ່າປັດໄຈທີ່ມີອິດທິພົນຕໍ່ກັບການວາງແຜນທາງການເງິນສ່ວນບຸກຄົນ ຂອງພະນັກງານທະນາຄານການຄ້າ ຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ດ້ານປັດໄຈພາຍໃນທີ່ມີອິດທິພົນຕໍ່ກັບການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າ ຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ໂດຍລວມແລ້ວໃນລະດັບການມີຜົນຫຼາຍ ເມື່ອພິຈາລະນາໃນແຕ່ລະດ້ານພົບວ່າ ພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ໃຫ້ຄວາມສຳຄັນຕໍ່ກັບປັດໄຈຄຸນລັກສະນະສ່ວນບຸກຄົນ ເປັນອັນດັບທຳອິດຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນປັດໄຈທາງດ້ານຄວາມຮູ້ໃນການວາງແຜນການເງິນຢູ່ໃນລະດັບຫຼາຍ, ຖັດລົງມາແແມ່ນປັດໄຈດ້ານລາຍຈ່າຍສ່ວນບຸກຄົນ ແລະ ຄວາມຈຳເປັນໃນການອອມ ແລະ ການລົງທຶນ ຢູ່ໃນລະດັບຫຼາຍ, ແລະ ປັດໄຈລາຍໄດ້ສ່ວນບຸກຄົນ. ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ. ດ້ານປັດໄຈພາຍນອກທີ່ມີອິດທິພົນຕໍ່ກັບການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ໂດຍລວມແລ້ວໃນລະດັບການມີຜົນຫຼາຍ ເມື່ອພິຈາລະນາໃນແຕ່ລະດ້ານພົບວ່າ: ພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ໃຫ້ຄວາມສຳຄັນຕໍ່ກັບປັດໄຈດ້ານເສດຖະກິດ ເປັນອັນດັບທຳອິດຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນປັດໄຈທາງດ້ານເຕັກໂນໂລຊີ ຢູ່ໃນລະດັບຫຼາຍ, ຖັດລົງມາແແມ່ນປັດໄຈດ້ານສັງຄົມ ຢູ່ໃນລະດັບຫຼາຍ, ແລະ ປັດໄຈດ້ານການເມືອງ. ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ ສະຣັນຣັດ ປຽນເປົ້າ ໄດ້ສຶກສາກ່ຽວກັບ ປັດໄຈທີ່ມີຜົນຕໍ່ການບໍລິຫານການເງິນສ່ວນບຸກຄົນຂອງພະນັກງານທະນະຄານກຸງເທບ ສຳນັກງານໃຫຍ່ ຈາກຜົນການສຶກສາພົບວ່າ: ປັດໄຈທີ່ມີຜົນຕໍ່ການບໍລິຫານການເງິນສ່ວນບຸກຄົນຂອງພະນັກງານ ທະນະຄານກຸງເທບ ສຳນັກງານໃຫຍ່ ໂດຍພາບລວມຢູ່ໃນລະດັບປານກາງ ເມື່ອພິຈາລະນາແລ້ວເຫັນວ່າ ດ້ານທີ່ມີລະດັບຄວາມສຳຄັນຫຼາຍຄື ດ້ານການບໍລິຫານການເງິນເພື່ອຄວາມໝັ້ນຄົງໃນຊີວິດ ແລະ ດ້ານດານບໍລິຫານການເງິນເພື່ອປ້ອງກັນຜົນກະທົບຈາກເຫດການທີ່ບໍ່ຄາດຝັນ.

### 4.3. ຄວາມສຳພັນລະຫວ່າງປັດໄຈທີ່ສົ່ງຜົນຕໍ່ກັບຈຸດປະສົງການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ

#### 4.3.1 ຄວາມສຳພັນລະຫວ່າງປັດໄຈພາຍໃນທີ່ສົ່ງຜົນຕໍ່ການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ

ຈາກຜົນການທົດສອບດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05 ເຫັນວ່າປັດໄຈພາຍໃນ ແລະພາຍນອກທັງໝົດ 8 ຕົວປ່ຽນ ມີຄວາມສຳພັນກັນຢູ່ໃນລະດັບຕໍ່າກວ່າ 0.75 ແລະ ມີຄວາມສຳພັນກັບຈຸດປະສົງການວາງແຜນທາງດ້ານການເງິນສ່ວນບຸກຄົນ ຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ. ສະນັ້ນ,

ຕົວປ່ຽນອິດສະຫລະ 8 ຕົວ ແມ່ນສາມາດນຳໄປພະຍາກອນຈຸດປະສົງການວາງແຜນທາງດ້ານການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງໄດ້. ປັດໄຈທີ່ສົ່ງຜົນຕໍ່ຈຸດປະສົງການວາງແຜນການເງິນສ່ວນບຸກຄົນຂອງພະນັກງານທະນາຄານ ທັງໝົດ 8 ຕົວປ່ຽນ ແມ່ນມີຄວາມສຳພັນກັບຈຸດປະສົງການວາງແຜນການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ (Y) ຢູ່ໃນລະດັບປານກາງ (R = 0.769) ແລະ ມີ 3 ປັດໄຈ ແມ່ນສາມາດອະທິບາຍ ຫຼື ພະຍາກອນຈຸດປະສົງການວາງແຜນການເງິນສ່ວນບຸກຄົນຂອງພະນັກງານທະນາຄານ ໄດ້ເຖິງ 59.2% ຫຼື ມີຜົນພຽງແຕ່ 59.2% (R Square = .592) ສ່ວນທີ່ເຫຼືອອີກ 41,8% ແມ່ນເປັນຜົນຈາກຕົວປ່ຽນອື່ນໆ ທີ່ບໍ່ໄດ້ນຳມາວິເຄາະໃນການຄົ້ນຄວ້າຄັ້ງນີ້ ດ້ວຍລະດັບຄວາມຄາດເຄື່ອນຂອງການປະເມີນ Std. Error=38.78% ເຊິ່ງໝາຍເຖິງຄວາມຜິດພາດທີ່ເກີດຈາກການພະຍາກອນໂດຍສະເລ່ຍ ແລະ ພົບວ່າມີພຽງ 3 ປັດໄຈທີ່ມີຄວາມສຳພັນກັນໃນລະດັບຄວາມສຳຄັນທາງສະຖິຕິ 0.05 ຄື: ປັດໄຈລາຍໄດ້ສ່ວນບຸກຄົນ (X2) ມີຄ່າ $\beta = 0.188$, ປັດໄຈດ້ານການເມືອງ (X5) ມີຄ່າ $\beta = 0.321$ ແລະ ປັດໄຈດ້ານວັດທະນະທຳ-ສັງຄົມ (X7) ມີຄ່າ $\beta = 0.247$. ຈາກຜົນການທົດສອບໄນຍະສຳຄັນທາງສະ ຖິຕິ 0.05 ຄ່າສຳປະສິດການຖົດຖອຍຂອງຕົວແປອິດສະຫຼະທີ່ສາມາດພະຍາກອນຕົວແປຕາມໄດ້ມີ: ປັດໄຈລາຍໄດ້ສ່ວນບຸກຄົນ (X2), ປັດໄຈດ້ານການເມືອງ (X5), ແລະ ປັດໄຈດ້ານວັດທະນະ ທຳ-ສັງຄົມ (X7). ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ ສິນທະຍາ ເຂມວິຣັດ ແລະ ດວງໃຈ ເຂມວິຣັດ ສຶກສາກ່ຽວກັບປັບໄຈທີ່ສົ່ງຜົນຕໍ່ການບໍລິຫານການເງິນສ່ວນບຸກຄົນ ຂອງບຸກຄະລາກອນກຸ່ມມະຫາວິທະຍາໄລເຕັກໂນໂລຊີ ລາດສະມົງຄົນ ໃນເຂດກຸງເທບມະຫານະຄອນ ຈາກຜົນການສຶກສາພົບວ່າ ປັດໄຈທີ່ມີຄວາມສຳພັນກັບການບໍລິຫານການເງິນສ່ວນບຸກຄົນຂອງຂອງບຸກຄະລາກອນກຸ່ມມະຫາວິທະຍາໄລເຕັກໂນໂລຊີ ລາດສະມົງຄົນ ໃນເຂດກຸງເທບມະຫານະຄອນ ຢ່າງມີໄນຍະສຳຄັນທາງສະທິຕິທີ່ລະດັບໄນຍະສຳຄັນ 0.01 ລຽງລຳດັບດ້ວຍຄ່າສຳປະສິດສະຫະສຳພັນ ຈາກຫຼາຍໄປຫາໜ້ອຍ. ປັດໄຈສິ່ງ ແວດລ້ອມໃນຄອບຄົວ (0.556), ປັດໄຈສິ່ງແວດແລ້ອມໃນບ່ອນເຮັດວຽກ (0.295), ແລະ ປັດໄຈສິ່ງແວັດລ້ອມທາງສັງຄົມ (0.120)

## 5. ສະຫຼຸບ

ຈາກຜົນຂອງການສຶກສາເຫັນວ່າກຸ່ມຕົວຢ່າງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ສ່ວນໃຫຍ່ແມ່ນເພດຊາຍ, ມີອາຍຸສະເລ່ຍ ໃນລະຫວ່າງ 31-40 ປີ, ມີສະຖານະພາບແຕ່ງງານ, ມີລະດັບການສຶກສາປະລິນຍາຕີ, ຕຳແໜ່ງງານແມ່ນວິຊາການ,ໄລຍະເວລາໃນການເຮັດວຽກ 11-15 ປີ, ມີລາຍໄດ້ຕໍ່ເດືອນ 2,800,001-5,000,000 ກີບ, ມີລາຍຈ່າຍສະເລ່ຍຕໍ່ເດືອນຫຼາຍກ່ວາ 5,000,000 ກີບ, ແລະ ຈຳນວນສະມາຊິກໃນຄອບຄົວ 5 ຄົນ.

ດ້ານຂໍ້ມູນກ່ຽວກັບພຶດຕິກຳໃນການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ພົບວ່າສ່ວນໃຫຍ່ແມ່ນວາງແຜນການເງິນດ້ວຍຕົນເອງ, ບຸກຄົນທີ່ສົ່ງຜົນຫຼາຍສຸດຕໍ່ການວາງແຜນແມ່ນຄອບຄົວ, ມີຮູບແບບການວາງແຜນທາງການເງິນຝາກໄວ້ກັບທະນາຄານ ຫຼື ສາຖາບັນການເງິນ, ຈຸດປະສົງຫຼັກໃນການວາງແຜນທາງການເງິນເພື່ອໃຫ້ມີອິດສະຫຼະພາບທາງການເງິນ, ເປົ້າໝາຍໃນການວາງແຜນທາງການເງິນແມ່ນບໍລິຫານຄວາມສ່ຽງທີ່ຈະເກີດຂຶ້ນໃນອະນາຄົດ, ເປົ້າໝາຍການລົງທຶນແມ່ນສະ ຖຽນລະພາບຂອງລາຍໄດ້, ວາງແຜນທາງການເງິນໂດຍເລືອກລົງທຶນ, ແມ່ນລົງທຶນໃນທຸລະກິດ (ຊື້ທີ່ດິນ, ອາຄານ, ໂຮງງານ) ແລະ ປະເພດຂອງການວາງແຜນທາງການເງິນແມ່ນແຜນການອອມ.

ດ້ານຂໍ້ມູນກ່ຽວກັບການວາງແຜນການຊື້ ຫຼື ຄອບຄອງຊັບສິນ ປະເພດຂອງການແຜນການຊື້ ຫຼື ຄອບຄອງໂດຍສ່ວນຫຼາຍແມ່ນອະສັງລິມະຊັບ ເຊັ່ນ: ເຮືອນ, ດິນ ມູນຄ່າ, ການວາງແຜນໃນດ້ານຂອງໜີ້ສິນ ປະເພດຂອງໜີ້ສິນໂດຍສ່ວນຫຼາຍແມ່ນສິນເຊື່ອເພື່ອທີ່ຢູ່ອາໄສ, ໂດຍສ່ວນໃຫຍ່ຈຳນວນເງິນຄາດວ່າຈະສາມາດຜ່ອນຊຳລະໜີ້ສິນໄດ້ໃນແຕ່ລະເດືອນນ້ອຍກວ່າ 500,000 ກີບ, ລະດັບອັດຕາຄວາມສ່ຽງທີ່ສາມາດຍອມຮັບໄດ້ສຳລັບການອອມ ແລະ

ການລົງທຶນ ລະດັບປານກາງ, ອັດຕາຜົນຕອບແທນທີ່ຕ້ອງການສຳລັບການອອມ ແລະ ການລົງທຶນ 5-10% ຕໍ່ປີ , ໄລຍະເວລາເທົ່າໃດທີ່ທ່ານຕ້ອງການບັນລຸເປົ້າໝາຍໃນການອອມ ຫຼື ການລົງທຶນ 3-6 ປີ, ວາງແຜນຈະສະສົມເງິນເພື່ອນຳໄປໃຊ້ຫຼັງກະສຽນ ເງິນອອມ, ວາງແຜນຈະສະສົມເງິນຈຳນວນຕໍ່ເດືອນເພື່ອນຳມາໃຊ້ຫຼັງກະສຽນ ຫຼາຍກ່ວາ 1,000,000 ກີບ, ວາງແຜນຈະວັດມາດຕະຖານການດຳລົງຊີວິດຂອງທ່ານຫຼັງກະສຽນ ອາຍຸເທົ່າເດີມ ຈຳນວນ 42 ຄົນ , ຮູບແບບໃນການວາງແຜນທາງການເງິນເນັ້ນຄວາມໝັ້ນຄົງທາງການເງິນ, ຮູບແບບການກະຈາຍຄວາມສ່ຽງ ນຳເງິນໄປລົງທຶນຊື້ອະສັງຫາລິມມະຊັບ, ແລະ ວິທີຈັດການກັບຄວາມສ່ຽງຄືການສຶກສາຂໍ້ມູນກ່ອນການນຳເງິນໄປລົງທຶນຢ່າງລະອຽດ.

ດ້ານຂໍ້ມູນກ່ຽວກັບປັດໄຈທີ່ມີອິດທິພົນຕໍ່ກັບການວາງແຜນທາງການເງິນສ່ວນບຸກຄົນ ຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ພົບວ່າ: ປັດໄຈພາຍໃນທີ່ມີອິດທິພົນຕໍ່ກັບການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າ ຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ໂດຍລວມແລ້ວໃນລະດັບການມີຜົນຫຼາຍ ເມື່ອພິຈາລະນາໃນແຕ່ລະດ້ານພົບວ່າ: ພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ໃຫ້ຄວາມສຳຄັນຕໍ່ກັບປັດໄຈຄຸນລັກສະນະສ່ວນບຸກຄົນ ເປັນອັນດັບທຳອິດຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນປັດໄຈທາງດ້ານຄວາມຮູ້ໃນການວາງແຜນ ການເງິນຢູ່ໃນລະດັບຫຼາຍ, ຖັດລົງມາແແມ່ນປັດໄຈດ້ານລາຍຈ່າຍສ່ວນບຸກຄົນ ແລະ ຄວາມຈຳເປັນໃນການອອມ ແລະ ການລົງທຶນ ຢູ່ໃນລະດັບຫຼາຍ ແລະ ປັດໄຈລາຍໄດ້ສ່ວນບຸກຄົນ.

ດ້ານຂໍ້ມູນກ່ຽວກັບປັດໄຈທີ່ມີອິດທິພົນຕໍ່ກັບການວາງແຜນທາງການເງິນສ່ວນບຸກຄົນ ຂອງພະນັກງານທະນາຄານການຄ້າ ຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ພົບວ່າ ປັດໄຈພາຍນອກທີ່ມີອິດທິພົນຕໍ່ກັບການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າ ຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ໂດຍລວມແລ້ວໃນລະດັບການມີຜົນຫຼາຍ ເມື່ອພິຈາລະນາໃນແຕ່ລະດ້ານພົບວ່າ: ພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ໃຫ້ຄວາມສຳຄັນຕໍ່ກັບປັດໄຈດ້ານເສດຖະກິດ ເປັນອັນດັບທຳອິດຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນປັດໄຈທາງດ້ານເຕັກໂນໂລຊີຢູ່ໃນລະດັບຫຼາຍ, ຖັດລົງມາແແມ່ນປັດໄຈດ້ານສັງຄົມ ຢູ່ໃນລະດັບຫຼາຍ ແລະ ປັດໄຈດ້ານການເມືອງ.

ດ້ານຄວາມສຳພັນລະຫວ່າງປັດໄຈພາຍໃນທີ່ສົ່ງຜົນຕໍ່ການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາຫຼວງພະບາງ ຜົນການວິເຄາະເຫັນວ່າ: ປັດໄຈທີ່ສົ່ງຜົນຕໍ່ຈຸດປະສົງການວາງແຜນການເງິນສ່ວນບຸກຄົນຂອງພະນັກງານ ທະນາຄານ ທັງໝົດ 8 ຕົວປ່ຽນ ແມ່ນມີຄວາມສຳພັນກັບຈຸດປະສົງການວາງແຜນການເງິນສ່ວນບຸກຄົນຂອງພະນັກງານທະນາຄານການຄ້າຕ່າງປະເທດລາວ (Y) ຢູ່ໃນລະດັບປານກາງ (R = 0.769) ແລະ ມີ 3 ປັດໄຈ ແມ່ນສາມາດອະທິບາຍ ຫຼື ພະຍາກອນຈຸດປະສົງການວາງແຜນການເງິນສ່ວນບຸກຄົນຂອງພະນັກງານທະນາຄານ ໄດ້ເຖິງ 59.2% ຫຼື ມີຜົນພຽງແຕ່ 59.2% (R Square = .592) ສ່ວນທີ່ເຫຼືອອີກ 41.8% ແມ່ນເປັນຜົນຈາກຕົວປ່ຽນອື່ນໆ ທີ່ບໍ່ໄດ້ນຳມາວິເຄາະໃນການຄົ້ນຄວ້າຄັ້ງນີ້ ດ້ວຍລະດັບຄວາມຄາດເຄື່ອນຂອງການປະເມີນ Std. Error = 38.78% ເຊິ່ງໝາຍເຖິງຄວາມຜິດພາດທີ່ເກີດຈາກການພະຍາກອນໂດຍສະເລ່ຍ ແລະ ພົບວ່າມີພຽງ 3 ປັດໄຈທີ່ມີຄວາມສຳພັນກັນໃນລະດັບຄວາມສຳຄັນທາງສະຖິຕິ 0.05 ຄື: ປັດໄຈລາຍໄດ້ສ່ວນບຸກຄົນ (X2) ມີຄ່າ $\beta = 0{,}188$, ປັດໄຈດ້ານການເມືອງ (X5) ມີຄ່າ $\beta = 0{,}321$ ແລະ ປັດໄຈດ້ານວັດທະນະທຳ-ສັງຄົມ (X7) ມີຄ່າ $\beta = 0{,}247$. ຄ່າສຳປະສິດການຖົດຖອຍຂອງຕົວແປອິດສະຫຼະທີ່ສາມາດພະຍາກອນຕົວແປຕາມໄດ້ມີ ປັດໄຈລາຍໄດ້ສ່ວນບຸກຄົນ (X2), ປັດໄຈດ້ານການເມືອງ (X5), ແລະ ປັດໄຈດ້ານວັດທະນະທຳ-ສັງຄົມ (X7).

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນ

ໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ການຈະນາ ທົ່ງທອງ. (2009). ການວາງແຜນທາງການເງິນສ່ວນບຸກຄົນທີ່ດີຈະເປັນຕົວກຳນົດທິດທາງ ແລະ ການຕັດສິນໃຈທາງການເງິນ

ຄຳສະແຫວງ ແກ້ວບົວລະພາ. (2011). ການວາງແຜນການເງິນສ່ວນບຸກຄົນຂອງພະນັກງານສົ່ງເສີມກະສິກຳ ສຳນັກງານໃຫຍ່ ແລະ ໜ່ວຍບໍລິການທີ່ຂຶ້ນກັບສາຂານະຄອນຫຼວງວຽງຈັນ (ມະຫາວິທະຍາໄລແຫ່ງຊາດ)

ຈິນດາລັກ ຖິ່ນໄພສິນ. (2013). ການວາງແຜນການເງິນສ່ວນບຸກຄົນຂອງຜູ້ປົກຄອງນັກຮຽນໂຮງຮຽນນິຣາດາ (ມະຫາວິທະຍາໄລແຫ່ງຊາດ).

ສາຍສະໝອນ ມັງໜໍ່ເມກ. (2012). ການບໍລິຫານການເງິນສ່ວນບຸກຄົນຂອງພະນັກງານ ແລະ ອາຈານໃນມະຫາວິທະຍາໄລແຫ່ງຊາດ.

ສີສະຫວັນ ສຸພົມມະນີຈັນ. (2012). ການວາງແຜນການເງິນສ່ວນບຸກຄົນຂອງນັກສຶກສາສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ (ມະຫາວິທະຍາໄລແຫ່ງຊາດ).

ວາດສະໜາ ຊາວະດີ. (2022). ສຶກສາປັດໄຈທີ່ສົ່ງຜົນຕໍ່ການວາງແຜນທາງການເງິນສ່ວນບຸກຄົນຂອງພະນັກງານລັດວິສາຫະກິດ ພາຍໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ.

Gilman and John. (2005). Personal financial planning cycle

Gordon. (2001). Each person has a different set of goals but there are 5 basic objectives used to set financial goals.

Kittipon Patiphan. (2010). studied the factors that influence the personal financial planning of people in Bangkok

Mathura. (1984). It is said that (career choice) results in income, which results in the life of each individual (Life Style).

On Anong Xai Boun Bhang. (2010). studied the personal financial planning of employees of Bangkok Thailand Limited (Mass) branch in Chiang Mai District.

Rat Dawan Sang Si Chan. (2018). studied the personal financial planning style of employees of Bangkok Thep Bank Limited (Mass) in Wat Phe Nao

Supanee Soporn. (2005). Financial planning for the housing of personnel living in the dormitory of Chulalongkorn University

Supatta Piyakezin. (2 023 ). Personal Finance, Faculty of Science and Accounting, Chulalongkorn University.

Sirinout Inlahkone. (2007). Personal Finance, 2nd Edition, University of Agriculture.